# ALIDIABETEX

**Generic name:** Metformin Hydrochloride and Glibenclamide
**Brand Name** : ALIDIABETEX
**Composition :**
Metformin hydrochloride..........................500mg.
Glibenclamide..............................................2.5mg.
**Indications:**
It can be used as second-line treatment for patients with type II diabetes who fail to control blood glucose level satisfactorily with diet control and exercise plus metformin or sulfonylurea.
**Dosage:**
Take it orally, with meals. The recommended starting dose is one tablet twice a day (500mg/2.5mg). The dose should be gradually increased until the lowest dose is achieved for good control of the patient's hyperglycemia. The maximum daily dose is not more than four tablets (2000mg/10mg).
**Contraindications:**
- Kidney disease or renal insufficiency.
- Congestive heart failure requiring drug treatment.
- People who are allergic to metformin or glyburide.
- Acute and chronic metabolic acidosis.
- Hypotension and hypoxia before intravenous pyelography or arteriography, major surgery, and clinical conditions.
- Patients with type I diabetes.
- Pregnant and lactating women.
- Children.

**Warning:**
- This product may cause hypoglycemia.
- Patients should monitor renal function, liver function and blood sugar during medication.
- Use drugs that affect kidney function or eliminate metformin with caution.
- Avoid excessive alcohol consumption.
- 5, liver insufficiency should not be used.
- Appropriate VitB12 supplement.

**Adverse Effects:**
- Gastrointestinal reaction.
- Fatigue, dizziness and rash.
- A few lactic acidosis.
- rare jaundice, liver function damage, bone marrow suppression, granulocytopenia, thrombocytopenia, etc.
- Anemia or malabsorption.

**Dosage form:** White tablet
**Expiry data:** 24 months from the date of manufacture.
**Packaging:** 10 tablets/blister, 50 blisters/box.
**Storage:**
- Seal preservation.
- Keep out of reach of children.

**Manufactured by:**
Laos Alliance Pharmaceutical Group Factory.
Saysettha Development Zone, Vientiane Capital, Lao PDR
Tel: (856-21) 737 051.
www.alliancepharmagroup.com

## ເອກະສານກຳກັບຢາ

# ALIDIABETEX

**ຊື່ທົ່ວໄປ:** Metformin Hydrochloride and Glibenclamide
**ຊື່ການຄ້າ :** ALIDIABETEX
**ສ່ວນປະກອບ:**
Metformin hydrochloride.......................500mg.
Glibenclamide.....................................2.5mg.
**ຂໍ້ບົ່ງໃຊ້:**
ຈັດເປັນຢາໃນກຸ່ມ Second-line ໃນການປິ່ນປົວພະຍາດເບົາຫວານປະເພດ II ມີກົນໄກການອອກລິດໃນການກະຕຸ້ນຕັບອ່ອນໃຫ້ຫຼັ່ງສານອິນຊູລິນ ເພື່ອຄວບຄຸມລະດັບນໍ້າຕານໃນເລືອດໃຫ້ຢູ່ໃນລະດັບເໝາະສົມ, ການນໍາໃຊ້ຄວນຢູ່ພາຍໃຕ້ການແນະນໍາຂອງແພດ ຫຼື ເພສັດຊະກອນຢ່າງເຄັ່ງຄັດ, ການຄວບຄຸມລະດັບນໍ້າຕານໃນເລືອດ ຄວນເຮັດຄຽງຄູ່ໄປກັບການຄວບຄຸມອາຫານ ແລະການອອກກໍາລັງກາຍຢ່າງເໝາະສົມ.
**ວິທີໃຊ້:**
ໃຊ້ຮັບປະທານ, ສາມາດຮັບປະທານພ້ອມອາຫານ, ຄວນເລີ່ມຮັບປະທານດ້ວຍປະລິມານເລີ່ມຕົ້ນ ແຕ່ລະຄັ້ງ 500mg/2.5mg (1 ເມັດ) ຮັບປະທານສອງຄັ້ງຕໍ່ວັນ ແລະ ສາມາດຄ່ອຍປັບປະລິມານເພີ່ມຂຶ້ນໃນອາທິດຕໍ່ມາ ເພື່ອ ໃຫ້ສາມາດຄວບຄຸມລະດັບນໍ້າຕານໃນເລືອດໄດ້ໃນເກນເຫມາະສົມ ແຕ່ບໍ່ໃຫ້ເກີນ 4 ເມັດຕໍ່ວັນ (2000mg/10mg).
**ຂໍ້ຫ້າມໃຊ້:**
- ຫ້າມໃຊ້ໃນຜູ້ແພ້ຢານີ້ ຫຼືແພ້ສ່ວນປະກອບທີ່ປະສົມໃນຕົວຢາ.
- ຫ້າມໃຊ້ກັບຄົນເຈັບທີ່ມີບັນຫາກ່ຽວກັບ ໄຂ່ຫຼັງ ຫຼື ການທໍາງານຂອງໄຂ່ຫຼັງບໍ່ປົກກະຕິ.
- ຄົນເຈັບທີ່ເປັນພະຍາດຫົວໃຈ ທີ່ຢູ່ໃນໄລຍະການປິ່ນປົວດ້ວຍຢາປິ່ນປົວພະຍາດຫົວໃຈ.
- ຄົນເຈັບຢູ່ໃນພາວະເລືອດເປັນພິດ ຫຼືໃນພາວະ Chronic metabolic acidosis.
- ຄົນເຈັບທີ່ຢູ່ໃນພາວະຄວາມດັນເລືອດຕໍ່າ, ພາວະຂາດອົກຊີໃນເລືອດ ຄົນເຈັບ ຢູ່ໃນໄລຍະກຽມບົ່ງມະຕິທາງດ້ານ Intravenous pyelography or Arteriography, ຄົນເຈັບທີ່ມີການປິ່ນປົວດ້ວຍການຜ່າຕັດ ລວມທັງຄົນເຈັບທີ່ຢູ່ໃນພາວະອາການວິກິດ ເປັນຕົ້ນ.
- ຄົນເຈັບທີ່ເປັນເບົາຫວານ ປະເພດ I.
- ໃນແມ່ຍິງຖືພາ ແລະກໍາລັງລ້ຽງລູກດ້ວຍນໍ້ານົມແມ່.
- ຫ້າມໃຊ້ໃນເດັກນ້ອຍ.

**ຄໍາເຕືອນ:**
- ການໃຊ້ຢານີ້ ອາດເຮັດໃຫ້ປະລິມານນໍ້າຕານໃນເລືອດຕົກ ຕໍ່າກວ່າປົກກະຕິ.
- ຄົນເຈັບທີ່ໃຊ້ຢາ ຄວນມີການກວດການທໍາງານຂອງໄຂ່ຫຼັງ, ຕັບ, ລະດັບທາດນໍ້າຕານໃນເລືອດ ໃນຊ່ວງທີ່ກໍາລັງໃຊ້ຢາ.
- ການໃຊ້ຢານີ້ອາດກະທົບເຖິງໜ້າທີ່ການທໍາງານຂອງໄຂ່ຫຼັງໃນການກໍາຈັດ Metformin ດັ່ງນັ້ນການໃຊ້ຕ້ອງມີຄວາມລະມັດລະວັງ.
- ຫຼີກເວັ້ນການດື່ມເຫຼົ້າ ໃນຊ່ວງການນໍາໃຊ້ຢານີ້.
- ຜູ້ມີບັນຫາກ່ຽວກັບຕັບ ບໍ່ຄວນນໍາໃຊ້ຢານີ້.

**ຜົນຂ້າງຄຽງ:**
- ມີປະຕິກິລິຍາຕໍ່ກະເພາະລໍາໄສ້.
- ເມື່ອຍ, ວິນວຽນ, ປວດຫົວ, ເປັນຜື່ນຕາມຜິວໜັງ.
- ຮູ້ສຶກຫິວ, ໃຈສັ່ນ, ວິຕົກກັງວົນ, ຫງຸດຫງິດກະວົນກະວາຍ
- ປັ່ນທ້ອງ, ເຈັບທ້ອງ, ຖອກທ້ອງ.
- ນອກນັ້ນ ຍັງພົບເຫັນບັນດາຜົນຂ້າງຄຽງອື່ນໆ ເຊັ່ນ: ປັດສະວະເຂັ້ມ, ຜູ້ປ່ວຍບາງຄົນພົບເຫັນເລືອດໃນປັດສະວະ, ຜິວໜັງຮູ້ສຶກໄວຕໍ່ແສງ, ຕົວສັ່ນ, ເຈັບຄໍ ອື່ນໆ.
- ຫາກພົບເຫັນອາການຂ້າງຄຽງອື່ນ ຄວນປຶກສາແພດ ເພື່ອຮັບປະກັນຄວາມປອດໄພໃນການນໍາໃຊ້.

**ຮູບແບບຂອງຢາ:** ຢາເມັດສີຂາວ.
**ວັນຫມົດອາຍຸ:** 24 ເດືອນ ຫຼັງຈາກວັນທີຜະລິດ.
**ຂະໜາດບັນຈຸ:** 1 ກັບມີ 50 ແຜງ, 1 ແຜງມີ 10 ເມັດ.
**ການເກັບຮັກສາ:**
- ເກັບຮັກສາໄວ້ໃນກັບກ່ອງເດີມ, ປິດຝາໃຫ້ສະນິດ ປ້ອງກັນການສໍາຜັດແສງແດດ.
- ເກັບຮັກສາຢາໃຫ້ຫ່າງໄກມືເດັກ.

**ຜະລິດໂດຍ:**
**ໂຮງງານຜະລິດຢາ ລາວພັນທະມິດ ຟາກມາ ກຣຸບ ຈໍາກັດ.**
**ສະຖານທີ່: ຕັ້ງຢູ່ເຂດ ພັດທະນາກວມລວມ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.**
ໂທລະສັບ: (856-21) 737 051
www.alliancepharmagroup.com